ກໍາລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ່ ໔໔໗/ປພຖຊ/໑໐໗໐໙**

# ບົດຄວາມ

## ການລະເມີດສິດທິໃນລາວ

ການລະເມີດສິດທິໃນລາວ ໜ້າເປັນຫ່ວງ. ເຖິງແມ່ນວ່າ ທ່ານ ທອງລຸນ ສີສຸລິດ ຮອງນາຍົກ ຣັຖມົນຕຣີ, ຣັຖມົນຕຣີກະຊວງການຕ່າງປະເທດ ໄດ້ກ່າວມາແລ້ວວ່າ "**ທາງ ສປປລາວ ແມ່ນໄດ້ຮ່ວມມື ກັບອົງການຈັດຕັ້ງສາກົນ ໃນດ້ານການສົ່ງເສີມ ແລະປົກປ້ອງສິດທິມະນຸດ ໂດຍບໍ່ໄດ້ ເລືອກຊັ້ນວັນນະ, ບໍ່ແມ່ນ ແບບທີ່ເອີ້ນວ່າ ເວົ້າແນວນຶ່ງ ແຕ່ພາກປະຕິບັດ ອີກແນວນຶ່ງ ແຕ່ປະການໃດ**".

ໃນຄວາມເປັນຈິງ, ຢູ່ພາຍໃນປະເທດ...ການລະເມີດສິດທິມະນຸດ ໄດ້ຝັງຮາກລົງເລິກແລ້ວ, ເພາະ ຣັຖທັມນູນ ໄດ້ບົ່ງໄວ້ ໃຫ້ມີພັກດຽວຄອງອໍານາດ, ຄືພັກປະຊາຊົນປະຕິວັດລາວ. ສັ້ນ ການທີ່ ທ່ານທອງລຸນ ສີສຸລິດ ອອກມາກ່າວ ກໍເປັນພຽງການປິດຫູບັງຕາປະຊາຊົນລາວ ແລະຫລອກລວງ ເພື່ອຂໍ ການຊ່ວຍເຫລືອ ຈາກອົງການຈັນຕັ້ງສາກົນ ເທົ່ານັ້ນເອງ.

ຕາມລາຍງານເຜີຍແຜ່ ຂອງຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະແຮງງານ ໃນປີ **2008** ເຫັນວ່າ "ການລະເມີດສິດທິມະນຸດ ຍັງມີຢູ່ຢ່າງຕໍ່ເນື່ອງໃນຣະດັບແຂວງ, ເມືອງແລະທ້ອງຖິ່ນ; ປະຊາຊົນຍັງຖືກ ປະຕິເສດ ໃນການປ່ຽນຣັຖບານຂອງຕົນ. ສະພາບຂອງນັກໂທດ ແມ່ນ ໂຫດຮ້າຍປ່າເຖື່ອນ. ການສໍ້ຣາດ ບັງຫລວງ ໃນວົງການຕໍາຣວດແລະ ຕຸລາການສານ ຍັງມີຢູ່. ພັກຣັດຍັງ ລະເມີດຕໍ່ ສິດທິ ສ່ວນບຸກຄົນ ໃນການປາກເວົ້າ, ຊື່ສານມວນຊົນ. ການປະຊຸມແລ ະການຈັດຕັ້ງສະມາຄົມ, ເຈົ້າໜ້າທີ່ພັກຣັດ ຍັງ ແຊກ ແຊງ ເສຣີພາບໃນການເຊື່ອຖືສາສນາ, ມີການຈໍາກັດສິດທິ ໃນການເຄື່ອນຍ້າຍ ຂອງ ພົລເມືອງແລະ ການຄ້າມະນຸດ ຍັງແຜ່ຂຍາຍ ໂດຍສະເພາະ ບັນຫາໂສເພນີ, ແມ່ຍິງ ແລະເດັກນ້ອຍລາວນັ້ນເອງ.

ກົດໝາຍໄດ້ກໍານົດ ໃຫ້ຣະບົບຕຸລາການ ແລະຫ້ອງການອະທິໄອຍະການ ມີຄວາມເປັນເອກຣາດ, ແຕ່ ສາມະຊິກຣັຖບານ, ເຈົ້າໜ້າທີ່ອາວຸໂສ ແລະຜູ້ມີອໍານາດອິດທິພົນ ເຂົ້າແຊກແຊງ; ໃຊ້ອິດທິພົນ

ຕໍ່ການຕັດສິນຂອງສານ. ສະພາບຂອງຜູ້ກະທຳຜິດ ທີ່ເປັນຍາດພີ່ນ້ອງ ຂອງພັກຣັດ ກໍຖືກປ່ອຍຕົວ, ລອຍນວນ ບໍ່ໄດ້ຮັບໂທດ.

ກົດໝາຍ ໄດ້ອະນຸຍາດ ໃຫ້ມີອິສຣະພາບໃນການປາກເວົ້າ ແລະວຽກງານສື່ສານມວນຊົນ... ແຕ່ໃນພາກປະຕິບັດ, ພັກຣັດ ໄດ້ຈຳກັດໃນການປາກເວົ້າຊົດເຊຽນ...ກ່າວຕຳນິຕິຕຽນ ການກະທຳທີ່ບໍ່ດີ. ພັກຣັດ ໃຫ້ຊົດເຊຽນຍ້ອງຍໍສັລເສີນແຕ່ຢ່າງດຽວ. ນອກຈາກນີ້, ພັກຣັດ ຍັງໄດ້ບີບບັງຄັບໃຫ້ຜູ້ໃຊ້ Internet ຕ້ອງໄປລົງທະບຽນ ກັບເຈົ້າໜ້າທີ່, ຊຶ່ງໃນຕົວແລ້ວ ກໍແມ່ນ ການຄວບຄຸມອິສຣາພາບ ຂອງປະຊາຊົນ ໃນການ ຕິດຕາມຂໍ້ມູນຂ່າວສານທາງ Internet ນັ້ນເອງ.

ສິ່ງທີ່ໜ້າເປັນຫ່ວງ ແລະວິຕົກເຫລືອທີ່ສຸດ ກໍຄືການຕ້ານສິດທິເສຣີພາບ ຂອງປະຊາຊົນ ຢ່າງຮ້າຍແຮງ; ມີການຈັບກຸມປະຊາຊົນ ແບບອຳເພີໃຈ...ໂດຍໃຊ້ ເຈົ້າໜ້າທີ່ຕຳຣວດ ເປັນເຄື່ອງມືປາບປາມນາບຂູ່, ເຂົ້າຫຍຸ້ງກ່ຽວເລື້ອງສ່ວນຕົວ ແລະໄຖເອົາເງິນ.

ການຂ້າຄົນຕາມໃຈຊອບແລະຜິດກົດໝາຍ, ການຈັບໄປ ແບບຫາຍສາບສູນ, ການທໍຣະມານ ຢ່າງໄຮ້ມະນຸສທັມ ຢູ່ໃນຫ້ອງສືບສວນກັກຂັງແລະຢູ່ໃນຄຸກ ຍັງມີຢູ່. ການກະທຳ ແບບໄຮ້ມະນຸສທັມ ແລະຕໍ່າຊ້າ ກໍຍັງມີຢູ່ ທັງໆທີ່ກົດໝາຍ ຫ້າມທຸບຕີທໍຣະມານບຸກຄົນທີ່ຖືກຈັບຕົວ ກໍຍັງມີຢູ່ເປັນປະຈຳ. -ພວກເຂົາ ຖືກຕຳຣວດ ແລະກອງກຳລັງ ຮັກສາຄວາມປອດພັຍ ທຸບຕີທໍຣະມານ, ຢູ່ໃນຄຸກ ຖືກລ່າມໂສ້ໃສ່ກັບມື, ບາງຄົນກໍຖືກຂັງປ່ຽວຢູ່ໃນຫ້ອງນ້ອຍໆບໍ່ມີແສງສວ່າງ, ພັກຣັດຖື ວ່າ "ເປັນເລື້ອງທັມດາຢູ່ໃນຄຸກໃຫຍ່". ສ່ວນຄຸກແຂວງ ຄຸກເມືອງນັ້ນ, ມີການໃສ່ກັບມື, ລ່າມໂສ້ ແລະຂັງລືມ.

ພວກເຮົາ ຮຽກຮ້ອງມາຍັງອົງການຈັດຕັ້ງສາກົນ, ສະມາຄົມເອເຊຽນ ຈົ່ງໄດ້ໃຊ້ມາຕການ ບີບຣັດໃຫ້ ພັກຣັດວຽງຈັນ ຕ້ອງເຄົາຣົບ ຕໍ່ສິດທິເສຣີພາບ ອັນແທ້ຈິງ ຂອງປະຊາຊົນ ແລະອະນຸຍາດໃຫ້ອົງການ ຈັດຕັ້ງສາກົນ ເຂົ້າໄປກວດກາ ສະພາບ ຂອງຄຸກກັກຂັງ ເພື່ອໃຫ້ການປິ່ນປົວ ແລະຮັກສາສຸຂພາບອະນາມັຍ ຂອງພວກເຂົາ ໃຫ້ຖືກຕ້ອງຕາມຫລັກການສາກົນ ເພາະພວກເຂົາເຫລົ່ານັ້ນ ກໍແມ່ນມະນຸດຊາດແລະພົລໂລກເໝືອນກັນ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໕ ມີນາ ໒໐໐໗**